# ອາຊະຍາກຳທຳຮ້າຍທຸກຄົນ ພວກເຮົາຊ່ວຍໄດ້



CALIFORNIA
CalVCB
VICTIM COMPENSATION BOARD

## ຂ້າພະເຈົ້າສາມາດຂໍຮັບການຊ່ວຍເຫຼືອໄດ້ແນວໃດ?

ຄະນະກຳມາທິການຊົດເຊີຍຜູ້ປະສົບເຄາະຮ້າຍແຫ່ງລັດຄາລິຟໍເນຍ (CalVCB) ເຮັດວຽກອຸທິດຕົນເຂົ້າໃນການສະໜອງຄວາມຊ່ວຍເຫຼືອທາງການເງິນສຳລັບຄ່າໃຊ້ຈ່າຍທີ່ກ່ຽວພັນກັບອາຊະຍາກຳໃນຫຼາຍກໍລະນີ.

ຜູ້ປະສົບເຄາະຮ້າຍທີ່ໄດ້ຮັບບາດເຈັບທາງຮ່າງກາຍ ຫຼື ໄດ້ຮັບບາດເຈັບທາງອາລົມ ອັນເປັນຜົນໂດຍກົງຈາກອາຊະຍາກຳຮຸນແຮງ ເຊິ່ງອາດຈະມີສິດໄດ້ຮັບຄວາມຊ່ວຍເຫຼືອ.

ເພື່ອໃຫ້ມີສິດໄດ້ຮັບຄວາມຊ່ວຍເຫຼືອດັ່ງກ່າວ, ບຸກຄົນຕ້ອງແມ່ນຜູ້ປະສົບເຄາະຮ້າຍທາງອາຊະຍາກຳທີ່ມີເງື່ອນໄຂນັ້ນ. ສຳລັບອາຊະຍາກຳໃດໜຶ່ງ, ການບາດເຈັບທາງອາລົມພຽງຢ່າງດຽວກໍເປັນເງື່ອນໄຂທີ່ພຽງພໍໄດ້. ສະມາຊິກຄອບຄົວ ແລະ ບຸກຄົນອັນເປັນທີ່ຮັກຍັງອາດຈະມີສິດໄດ້ຮັບນຳອີກ.

## ຂ້າພະເຈົ້າຈະນຳໃຊ້ໄດ້ແນວໃດ?

- ດາວໂຫຼດຄຳຮ້ອງໄດ້ທີ່ **victims.ca.gov** ແລະ ສົ່ງຕາມທີ່ຢູ່ຂ້າງລຸ່ມນີ້:
- ໂທຫາ**1-800-777-922**9
- ເພື່ອຂໍຄວາມຊ່ວຍເຫຼືອໃນທ້ອງຖິ່ນຂອງທ່ານ, ກະລຸນາເຂົ້າໄປທີ່ **victims.ca.gov/victims/local-help.aspx** ເພື່ອຊອກຫາເຈົ້າໜ້າທີ່ສະໜັບສະໜູນຜູ້ປະສົບເຄາະຮ້າຍໃນເຂດມົນທົນໃກ້ບ້ານທ່ານທີ່ສາມາດຊ່ວຍທ່ານນຳໃຊ້ ແລະ ໃຫ້ຄຳແນະນຳກ່ຽວກັບຂະບວນການຍຸດຕິທຳທາງອາຍາ.

## ມີຂໍ້ມູນອື່ນໃດອີກທີ່ອາດຈະເປັນປະໂຫຍດ?

- ໃບຮັບເງິນຄ່າໃຊ້ຈ່າຍທີ່ກ່ຽວພັນກັບອາຊະຍາກຳ
- ໃບບິນຮຽກເກັບເງິນສຳລັບຄ່າຢາ, ທັນຕະກຳ ຫຼື ສຸຂະພາບຈິດທີ່ກ່ຽວພັນກັບອາຊະຍາກຳ
- ບັດປະກັນທາງການແພດ

## ວິທີການທີ່ CALVCB ໄດ້ຊ່ວຍຜູ້ປະສົບເຄາະຮ້າຍທາງອາຍາໃນປີ 2017




## ອາຊະຍາກຳທີ່ໄດ້ຮັບການຄຸ້ມຄອງລວມມີ ແຕ່ບໍ່ຈຳກັດພຽງແຕ່:

- ການທຳຮ້າຍຮ່າງກາຍ
- ການທາລຸນເດັກ
- ຄວາມຮຸນແຮງພາຍໃນຄອບຄົວ
- ການເມົາແລ້ວຂັບ
- ຄວາມຮຸນແຮງຕໍ່ຜູ້ສູງອາຍຸ
- ອາຊະຍາກຳທີ່ເກີດຈາກຄວາມກຽດຊັງ
- ຄາດຕະກຳ
- ການຄ້າມະນຸດ
- ການກໍ່ກວນທາງອອນໄລນ໌
- ການປຸ້ນຈີ້
- ການທຳຮ້າຍທາງເພດ
- ການສະກົດຮອຍຕາມ
- ການຂັບຂີ່ລົດແບບປະໝາດຈົນເຮັດໃຫ້ມີຜູ້ອື່ນເສຍຊີວິດ

## CalVCB ສາມາດຊ່ວຍຈ່າຍຄ່າ:

- ການໃຫ້ຄຳປຶກສາ
- ການປິ່ນປົວທາງການຢາ ແລະ ທັນຕະກຳ
- ການສູນເສຍລາຍຮັບ
- ຄ່າມ້ຽນຄາບສົ່ງສະການ
- ຄວາມປອດໄພທີ່ພັກອາໄສ
- ອຸປະກອນການແພດໃນກໍລະນີທີ່ສູນຫາຍ ຫຼື ຖືກລັກ
- ການປັບແຕ່ງບ້ານ ຫຼື ຍານພາຫະນະໃຫ້ເໝາະສຳລັບຜູ້ປະສົບເຄາະຮ້າຍທີ່ໄດ້ຮັບຄວາມພິການ
- ການອະນາໄມສ້ອມແປງບ່ອນເກີດເຫດອາຊະຍາກຳ
- ການຍ້າຍບ່ອນຢູ່

ເຊິ່ງຈຳນວນທີ່ຈ່າຍໃຫ້ແກ່ການສູນເສຍແຕ່ລະຢ່າງແມ່ນມີຂີດຈຳກັດ.

Laotian | ປັບປຸງ. 6.22.2018

victims.ca.gov | 1-800-777-9229 | info@victims.ca.gov | P.O. Box 3036 Sacramento, CA 95812
*ຄົນພິການຫູ ແລະ ຄົນທີ່ມີບັນຫາດ້ານການໄດ້ຍິນ: ກະລຸນາໂທຫາ ສູນບໍລິການຖ່າຍທອດການສື່ສານແຫ່ງລັດຄາລິຟໍເນຍ ໄດ້ທີ່ເບີ 711